ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------- 000 --------

ແຂວງຊຽງຂວາງ

ສໍານັກງານປົກຄອງແຂວງ

ເລກທີ່ 20 /ຈຂ,ຊຂ

ວັນທີ 27/ 11 /2015

# ຄໍາສັ່ງແນະນໍາ

## ວ່າດ້ວຍການຄຸ້ມຄອງຊັບພະຍາກອນແຮ່ທາດຢູ່ແຂວງຊຽງຂວາງ.

ເຖິງ: ບັນດາພະແນກການ, ກອງບັນຊາການປກສ, ປກຊ, ເຈົ້າເມືອງທຸກໆເມືອງ, ບັນດານັກທຸລະກິດ, ບໍລິສັດ ແລະ ການຈັດຕັ້ງກຸ່ມບ້ານ, ນາຍບ້ານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວແຂວງຊຽງຂວາງ.

- ອີງຕາມ: ສິດ ແລະ ໜ້າທີ່ຂອງເຈົ້າແຂວງ / ເຈົ້າຄອງນະຄອນຫຼວງ ທີ່ລະບຸໄວ້ໃນໝວດທີ III ມາດຕາ 14 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສ ປ ປ ລາວ.
- ອີງຕາມ: ກົດໝາຍວ່າດ້ວຍແຮ່ທາດ ( ສະບັບປັບປຸງໃໝ່ ) ສະບັບເລກທີ 02 / ສພຊ, ລົງວັນທີ 20 ທັນວາ 2011.
- ອີງຕາມ: ແຜນຍຸດທະສາດພັດທະນາວຽກງານທໍລະນີສາດ ແລະ ແຮ່ທາດ 2016 – 2020, ສະບັບເລກທີ່ 376 / ກຊສ, ລົງວັນທີ 12 ມີນາ 2014.

ແຂວງຊຽງຂວາງເປັນແຂວງໜຶ່ງທີ່ມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນແຮ່ທາດນາໆຊະນິດ ຊຶ່ງເປັນປັດໄຈໜຶ່ງທີ່ເປັນທ່າແຮງໃຫ້ແກ່ແຂວງໃນການພັດທະນາເສດຖະກິດ - ສັງຄົມ ໃນສະເພາະໜ້າກໍ່ຄືຍາວນານ. ໃນໄລຍະຜ່ານມາແຮ່ທາດຈໍານວນໜຶ່ງໄດ້ຮັບອະນຸຍາດໃນການຊອກຄົ້ນ - ສໍາຫຼວດ ແລະ ຂຸດຄົ້ນເພື່ອຕອບສະໜອງໃນການພັດທະນາເສດຖະກິດ - ສັງຄົມຕາມແນວທາງນະໂຍບາຍຂອງພັກ. ເຖິງວ່າຈະມີການອະນຸຍາດໃຫ້ເຄື່ອນໄຫວຢ່າງຖືກຕ້ອງຕາມລະບຽບກໍ່ຕາມ ແຕ່ກໍ່ຍັງມີບາງໂຄງການຍັງມີຄວາມຫຍຸ້ງຍາກໃນການຄຸ້ມຄອງ, ຕິດຕາມການເຄື່ອນໄຫວໃນພາກປະຕິບັດຕົວຈິງຢູ່ແຂວງຊຽງຂວາງ.

ສະນັ້ນ, ເພື່ອໃຫ້ວຽກງານການຄຸ້ມຄອງກ່ຽວກັບຊັບພະຍາກອນແຮ່ທາດໄດ້ເຄື່ອນໄຫວຢ່າງຖືກຕ້ອງຕາມລະບຽບກົດໝາຍ ແລະ ມີປະສິດທິຜົນ.

## ເຈົ້າແຂວງ, ແຂວງຊຽງຂວາງອອກຄໍາສັ່ງແນະນໍາ ດັ່ງນີ້:

1. ຊັບພະຍາກອນແຮ່ທາດທີ່ຢູ່ເທິງໜ້າດິນ ແລະ ໃຕ້ດິນ ແມ່ນຊັບສົມບັດຂອງລັດ, ຫ້າມບໍ່ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ບັນດາອົງການຈັດຕັ້ງຕ່າງໆຄຸ້ມຄອງ ແລະ ນໍາໃຊ້ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຈັດຕັ້ງຂອງລັດຕາມລະບຽບກົດໝາຍທີ່ໄດ້ກໍານົດໄວ້.

2. ບັນດາບໍລິສັດຂຸດຄົ້ນ - ສຳຫຼວດແຮ່ທາດ ທີ່ໄດ້ຮັບອະນຸຍາດຈາກລັດຖະບານດຳເນີນການເຄື່ອນໄຫວທຸລະກິດຢູ່ແຂວງຊຽງຂວາງຕ້ອງນຳເອກະສານທີ່ກ່ຽວຂ້ອງທັງໝົດມາສະເໜີຕໍ່ອຳນາດການປົກຄອງແຂວງ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເພື່ອຮັບຊາບ ແລະ ປະສານສົມທົບໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

2.1 ບໍລິສັດຕ້ອງມີສຳນັກງານຫ້ອງການຂອງຕົນຕັ້ງຢູ່ເທດສະບານຂອງແຂວງ ຫລື ເມືອງທີ່ໂຄງການຕັ້ງຢູ່ຢ່າງເປັນທາງການ ເພື່ອສະດວກໃນການພົວພັນປະສານສົມທົບໃນການເຄື່ອນໄຫວວຽກງານຂອງບໍລິສັດກ່ອນຈະລົງມືດຳເນີນໂຄງການ.

2.2 ທຸກໆການເຄື່ອນໄຫວຂອງແຕ່ລະບໍລິສັດຂຸດຄົ້ນ - ສຳຫຼວດແຮ່ທາດ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງທໍລະນີສາດ ແລະ ແຮ່ທາດ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງໂດຍປະຕິບັດຕາມພາລະບົດບາດຄວາມຮັບຜິດຊອບ ແລະ ລະບຽບການທີ່ໄດ້ກຳນົດ.

2.3 ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງແຕ່ງຕັ້ງວິຊາການຂອງຕົນລົງປະຈຳພາກສະໜາມເພື່ອເຂົ້າຮ່ວມໃນການຄຸ້ມຄອງ, ຕິດຕາມ ແລະ ຢັ້ງຢືນໃນການເຄື່ອນໄຫວເຕັກນິກຂອງບໍລິສັດ. ພ້ອມທັງເປັນຜູ້ປະສານສົມທົບກັບອຳນາດການປົກຄອງຢູ່ຮາກຖານໃນການເຄື່ອນໄຫວວຽກງານຂອງບໍລິສັດ ແລະໄກ່ເກ່ຍແກ້ໄຂຜົນກະທົບ ຫລື ຂໍ້ຂັດແຍ່ງທີ່ເກີດຂຶ້ນໃຫ້ທັນກັບເວລາ ແລະ ບໍລິສັດຕ້ອງໄດ້ເອື້ອອຳນວຍຄວາມສະດວກໃນການເຮັດວຽກ ແລະ ປະຕິບັດພັນທະຕໍ່ວິຊາການຕາມຄວາມເໝາະສົມ.

3. ບັນດາບໍລິສັດທີ່ໄດ້ຮັບອະນຸຍາດຂຸດຄົ້ນ - ສຳຫຼວດແຮ່ທາດຢູ່ແຂວງຊຽງຂວາງຕ້ອງໄດ້ສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາດ້ານສິ່ງແວດລ້ອມສັງຄົມ - ທຳມະຊາດ ສະເໜີໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມພິຈາລະນາຮັບຮອງ ກ່ອນລົງມືຈັດຕັ້ງປະຕິບັດໂຄງການ, ທັງນີ້ກໍ່ເປັນການສ້າງຄວາມສະດວກໃຫ້ແກ່ການດຳເນີນວຽກງານ

4. ໃນແຕ່ລະສົກປີງົບປະມານຜູ້ດຳເນີນໂຄງການຂຸດຄົ້ນ - ສຳຫຼວດແຮ່ທາດ ຕ້ອງມອບເງິນພັນທະພັດທະນາທ້ອງຖິ່ນ ແລະ ພັດທະນາສັງຄົມ ທີ່ໄດ້ກຳນົດໄວ້ໃນສັນຍາມອບໃຫ້ແຂວງ ໂດຍມອບເຂົ້າບັນຊີຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຊຽງຂວາງ ຕາມທິດຊີ້ນຳຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ແຂວງຊຽງຂວາງ.

5. ບັນດາບໍລິສັດ ແລະ ກິດຈະການທີ່ພວມດຳເນີນການຂຸດຄົ້ນ - ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດຊະນິດຕ່າງໆຢູ່ໃນປະຈຸບັນ ຊຶ່ງໄລຍະຜ່ານມາລັດບໍ່ໄດ້ອະນຸຍາດໃຫ້ເຄື່ອນໄຫວໃນການດຳເນີນກິດຈະການດັ່ງກ່າວຖືວ່າເປັນການລະເມີດຕໍ່ລະບຽບກົດໝາຍ. ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງລົງກວດກາ, ຕິດຕາມ, ແກ້ໄຂໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍ.

6. ຫ້າມບໍ່ໃຫ້ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆເຄື່ອນໄຫວຂຸດຄົ້ນ - ສຳຫຼວດ, ຂຸດຄົ້ນ, ຂົນສົ່ງ ແລະ ປຸງແຕ່ງແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຈາກອຳນາດການປົກຄອງແຂວງ ແລະ ພະແນກການທີ່ກ່ຽວຂ້ອງ ລວມທັງການຂຸດຄົ້ນຫີນ - ຊາຍທີ່ຕິດພັນໃນການລັກລອບເອົາຄຳຕົກຂ້ອນ. ຖ້າຫາກລະເມີດຈະຖືກປະຕິບັດວິໄນຕາມລະບຽບກົດໝາຍທີໄດ້ກຳນົດໄວ້.

7. ບັນດາບຸກຄົນ, ນິຕິບຸກຄົນ, ບໍລິສັດ ແລະ ນັກທຸລະກິດທີ່ມີຈຸດປະສົງໃນການເກັບກຳຂໍ້ມູນ, ຊອກຄົ້ນ - ສຳຫຼວດ, ຂຸດຄົ້ນແຮ່ ແລະ ແຮ່ທາດທຸກຊະນິດ ລວມທັງຫີນ - ຊາຍ ທີ່ຈະສະເໜີຂໍອະນຸຍາດຈາກສູນກາງ ແລະ ພົວພັນກັບເມືອງ ຕ້ອງໄດ້ຮັບອະນຸຍາດຈາກອຳນາດການປົກຄອງແຂວງຈຶ່ງຈັດຕັ້ງປະຕິບັດໄດ້.

8. ຫ້າມບໍ່ໃຫ້ພະແນກການ, ກົມກອງ, ອຳນາດການປົກຄອງເມືອງ, ກຸ່ມບ້ານ ແລະ ນາຍບ້ານ ຕົກລົງອະນຸຍາດ ແລະ ເຮັດສັນຍາຊອກຄົ້ນ - ສຳຫຼວດ, ຂຸດຄົ້ນ, ຂົນສົ່ງ ແລະ ປຸງແຕ່ງແຮ່ທາດທຸກຊະນິດລວມທັງການຂຸດຄົ້ນຫີນ - ຊາຍ ທຸກປະເພດຢ່າງເດັດຂາດ.

9. ບັນດາບໍລິສັດທີ່ໄດ້ຮັບອະນຸຍາດໃນການຊອກຄົ້ນ - ສຳຫຼວດ, ຂຸດຄົ້ນ, ຂົນສົ່ງ ແລະ ປຸງແຕ່ງແຮ່ທາດທຸກຊະນິດທີ່ເຄື່ອນໄຫວຢູ່ໃນແຂວງຊຽງຂວາງ ຫາກມີການລະເມີດຕໍ່ຄຳສັ່ງແນະນຳສະບັບນີ້ຈະຖືກກ່າວເຕືອນ, ສຶກສາອົບຮົມ ຫລື ໂຈະກິດຈະການຊົ່ວຄາວຈົນກວ່າຈະໄດ້ຮັບການແກ້ໄຂ.

10. ມອບໃຫ້ບັນດາກົມກອງ, ພະແນກການ, ອຳນາດການປົກຄອງເມືອງ, ກຸ່ມບ້ານ, ນາຍບ້ານ, ບັນດາບໍລິສັດ, ນັກທຸລະກິດ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າຈົ່ງພ້ອມກັນຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ໃຫ້ເຂັ້ມງວດ.

- ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງເປັນໃຈກາງໃນການປະສານສົມທົບກັບທຸກພາກສ່ວນໃນການຄຸ້ມຄອງ, ຕິດຕາມ, ກວດກາ ການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຊັບພະຍາກອນແຮ່ທາດຢູ່ແຂວງຊຽງຂວາງ ເພື່ອສະຫຼຸບລາຍງານ ແລະ ຂໍທິດຊີ້ນຳຈາກການນຳແຂວງເປັນແຕ່ລະໄລຍະ.

ເຈົ້າແຂວງ, ແຂວງຊຽງຂວາງຈຶ່ງໄດ້ອອກຄຳສັ່ງແນະນຳສະບັບນີ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ມີຜົນນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ, ແຂວງຊຽງຂວາງ.

ບົວສອນ ສີບວນທອງ